# ໜັງສື ໂກລິນໂທ ໑

ໃຈຄວາມສຳຄັນ    ໃຫ້ດຳເນີນຊີວິດໃນທາງບໍຣິສຸດດ້ວຍ
ອົງພຣະຄຣິດ

ຈຳນວນບົດ    ໑໖ ບົດ

ຈົດໝາຍສບັບນີ້ຂຽນທີ່ເມືອງເອເຟດໃນປີ ຄ.ສ. ໕໗ ຣະຫວ່າງທີ່ທ່ານໂປໂລພັກຢູ່ທີ່ນັ້ນເປັນເວລາສາມປີ ຂຽນໄປຫາຄົນທີ່ເຊື່ອໃນເມືອງໂກລິນໂທ ເປັນຈົດໝາຍທີ່ເວົ້າເຣື່ອງຣະບຽບວິໄນພາຍໃນຄຣິສຕະຈັກ

## ວ່າດ້ວຍເມືອງໂກລິນໂທ

ໃນສໄມທ່ານໂປໂລນັ້ນ ໂກລິນໂທເປັນເມືອງເອກໃນແຂວງອະຂາຢາ (ອາກາອີ) ຂອງອານາຈັກໂຣມ ປະຊາຊົນໃນເມືອງນັ້ນມີຫລາຍກວ່າເຈັດຮ້ອຍພັນຄົນ ແຕ່ຕົກເປັນທາດຂອງຊາວໂຣມມີປະມານສີ່ຮ້ອຍພັນຄົນ ມີຊົນຊາດຕ່າງ ໆ ຄືຊາວໂຣມຊຶ່ງເປັນຜູ້ປົກຄອງກັບຊາວເຣເລັນ ແລະຊາວຢຸດາຢູ່ໃນເມືອງນີ້ ອາຊີບຂອງພົລະເມືອງສ່ວນຫລາຍແມ່ນການຄ້າຂາຍ ນອກຈາກນັ້ນກໍ່ມີການຫລິ້ນໄພ້ຫລິ້ນເບັ້ຍ ແລະການຊົ່ວຮ້າຍຕ່າງ ໆ ເຊັ່ນການຫລິ້ນຊູ້ສູ່ຜົວເມັຽທ່ານເປັນຕົ້ນ ຈົນຊື່ສຽງໃນທາງບໍ່ດີຂອງເມືອງນີ້ຊ່າລືທົ່ວ ໆ ໄປ ເມືອງອັນນີ້ແຫລະທີ່ທ່ານໂປໂລໄດ້ປ່າວປະກາດຂ່າວປະເສີດຂອງພຣະເຢຊູຄຣິດ.

## ປວັດຂອງຄຣິສຕະຈັກໃນເມືອງໂກລິນໂທ

ໃນປີ ຄ.ສ. ໕໔ ທ່ານໂປໂລໄດ້ໄປປ່າວປະກາດທີ່ເມືອງໂກລິນ-

ໄທ (ກິຈການ ໑໘:໑–໑໗) ເພິ່ນໄດ້ພັກເຊົາຢູ່ນຳທ່ານອາກີລາແລະນາງປຣິສີລາ ເພິ່ນໄດ້ຫາລ້ຽງຊີວິດດ້ວຍການຕ່ຳຫູກ ແລະໄດ້ເຂົ້າໄປເທສນາສັ່ງສອນໃນໂຮງທັມະສາລາຂອງພວກຢູດາທຸກວັນຊະບາໂຕ ເມື່ອເວລາພວກເຂົາຂັດຂວາງການປ່າວປະກາດຂອງເພິ່ນ ເພິ່ນກໍໄປສັ່ງສອນຢູ່ໃນເຮືອນຂອງທ່ານຢູສໂຕ.

ພາຍຫລັງທີ່ເພິ່ນໄດ້ຈາກພວກເຂົາໄປແລ້ວ ເພິ່ນໄດ້ຝາກໜັງສືສບັບນຶ່ງໄປເຕີມພວກ ຄຣິສຕຽນ ບໍ່ໃຫ້ຄົບຫາສມາຄົມ ກັບຄົນຫລິ້ນຊູ້ສູ່ຜົວເມັຍທ່ານ (໔:໓–໑໐) ແຕ່ໜັງສືສບັບນີ້ໄດ້ສູນເສັຍໄປແລ້ວຫລັງຈາກນັ້ນທ່ານອາໂປໂລໄດ້ໄປສອນພວກຄຣິສຕຽນທີ່ເມືອງໂກລິນໂທ (໑໘:໒໔–໒໘,໑໙:໑) ຕໍ່ມາທ່ານໂປໂລໄດ້ຮັບໜັງສືສບັບນຶ່ງຈາກພວກພີ່ນ້ອງໃນເມືອງໂກລິນໂທ (໗:໑) ເມື່ອເພິ່ນໄດ້ຍິນຂ່າວບໍ່ດີກ່ຽວກັບພວກພີ່ນ້ອງເພິ່ນກໍຂຽນຈົດໝາຍໄປຫາພວກເຂົາຢູ່ເມືອງໂກລິນໂທ

ວ່າດ້ວຍຄວາມມຸ່ງໝາຍ:

໑. ທ່ານໂປໂລຕ້ອງການຢາກແກ້ໄຂຂໍ້ຂັດແຍ້ງກັນຣະຫວ່າງ ຄຣິສຕະຈັກ ທີ່ເມືອງໂກລິນໂທ (໑–໔)
໒. ເພິ່ນ ຕ້ອງການ ຕອບຈົດໝາຍ ທີ່ພວກ ພີ່ນ້ອງ ຂຽນມາຖາມ ກ່ຽວກັບ ການເອົາຜົວເອົາເມັຍ ການກິນແລະບໍ່ກິນອາຫານທີ່ເອົາບູຊາຮູບເຄົາຣົບ.
໓. ມີຄຣູສອນອື່ນ ໆ ທີ່ໄດ້ໄປສອນພວກພີ່ນ້ອງ ໃນແນວທາງແຕກຕ່າງກັນກັບທ່ານໂປໂລ

໔. ເພິ່ນເປັນຫ່ວງກັງວົນນຳກິຈການທີ່ບໍ່ດີບໍ່ງາມຂອງພວກພີ່ນ້ອງ ຈຶ່ງຂຽນໄປ ອົບຣົມ ສັ່ງສອນ ພວກເຂົາ ແລະທັງ ຕ້ອງການ ປາກບອກວ່າເພິ່ນຈະໄປຢ້ຽມຢາມພວກເຂົາ (໔:໑໗—໒໑)

໕. ເພາະວ່າພວກພີ່ນ້ອງຄິດຜິດກ່ຽວກັບ ຂອງປະທານ ແຫ່ງພຣະວິນຍານບໍຣິສຸດ ຄືພວກເຂົາໄດ້ສແດງທາສິ່ງນັ້ນຫລາຍໂພດ ແທນທີ່ຈະສແດງທາໝາກຜົນແຫ່ງພຣະວິນຍານ ຄືຄວາມຮັກ ບົດ ໑໒—໑໔

ວ່າດ້ວຍເນື້ອຄວາມແລະພາກຕ່າງ ໆ:

ຈົດໝາຍສບັບນີ້ໄດ້ຂຽນກ່ຽວກັບການປະພຶດໃນຄຣິສຕະຈັກແລະການຈັດຕັ້ງຣະບຽບວິໄນ. ສນັ້ນຈຶ່ງຊ່ອຍໃຫ້ພວກເຮົາຊາບເຣື່ອງການເປັນຢູ່ຂອງຄຣິສຕະຈັກເດີມ ໃນຈົດໝາຍສບັບນີ້ເມື່ອຈັດເປັນພາກໃຫຍ່ໆກໍມີເຖິງຫ້າພາກຄື :

ຄຳນຳ ໑:໑—໙

ພາກທີ ໑ ວ່າດ້ວຍການແຕກແຍກພາຍໃນຄຣິສຕະຈັກ

ບົດ ໑:໑໐—໔:໒໑

ໃນພາກນີ້ມີເຣື່ອງສຳຄັນດັ່ງຕໍ່ໄປນີ້ຄື:

໑. ຂ່າວປະເສີດບໍ່ແມ່ນເປັນໄປຕາມປັນຍາໂລກ ແຕ່ເປັນໄປຕາມພຣະປັນຍາຂອງພຣະເຈົ້າ ໑:໑໗—໒:໑໖

໒. ພວກພີ່ນ້ອງໃນເມືອງໂກລິນໂທແຕກແຍກກັນ ກໍເພາະວ່າ

ຢູ່ຝ່າຍເນື້ອໜັງ ໓:໑–໔

໓. ວ່າດ້ວຍ ບໍາເໜັດ ຂອງຜູ້ກໍ່ສ້າງ ພຣະວິຫານ ຂອງ ພຣະເຈົ້າ ໓:໕–໔:໒໑

## ພາກທີ ໒ ວ່າດ້ວຍຄວາມຜິດບາບພາຍໃນ ຄຣິສຕະຈັກ ບົດ ໕–໖

໑. ການຫລິ້ນຊູ້ສູ່ຜົວເມັຍທ່ານ ບົດ ໕

໒. ການຜິດຖຽງກັນ ບົດ ໖

## ພາກທີ ໓ ວ່າດ້ວຍບັນຫາທີ່ເກີດຂຶ້ນໃນຄຣິສຕະຈັກ ບົດ ໗–໑໐

໑. ການເອົາກັນເປັນຜົວເມັຍ ບົດ ໗

໒. ການກິນອາຫານທີ່ເອົາບູຊາຮູບເຄົາຣົບ ບົດ ໘–໑໐

## ພາກທີ ໔ ວ່າດ້ວຍການປະພຶດພາຍໃນຄຣິສຕະຈັກ ບົດ ໑໑–໑໔

໑. ກ່ຽວກັບຜູ້ຍິງ ບົດ ໑໑:໒–໑໔

໒. ກ່ຽວກັບການລະນຶກຄິດເຖິງຄວາມຕາຍຂອງພຣະເຢຊູ ບົດ ໑໑:໑໗–໓໔

໓. ກ່ຽວກັບຂອງປະທານແຫ່ງພຣະວິນຍານ ບົດ ໑໒–໑໔

໔. ກ່ຽວກັບການປະພຶດໃນເວລາຊຸມນຸມກັນ ບົດ ໑໔

# ພາກທີ ໕ ວ່າດ້ວຍຄຳໂອວາດພາຍໃນຄຣິສຕະຈັກ

## ບົດ ໑໕

໑. ກ່ຽວກັບການຄືນມາຈາກຕາຍຂອງພຣະເຢຊູ

ເຣື່ອງສຸດທ້າຍ ໑. ການແຜ່ເງິນ

໒. ແຜນການອອກເດີນທາງ

໓. ການສະແດງຄວາມຄຳນັບ ບົດ ໑໖